# ຄົນລາວຕ້ອງຄົ້ນຫາ ຄວາມມັກຂອງຕົນເອງ

ຂ້າພະເຈົ້າໄດ້ມີໂອກາດໄປເວົ້າໃນການສັມມະນາ ກ່ຽວກັບການເຮັດວຽກໃຫ້ໄດ້ປະສົບຄວາມສຳເຣັດໃນກໍຣະນີ ທີ່ເປັນຄົນລາວ ຂ້າພະເຈົ້າແນມເບິ່ງວ່າຄົນລາວຫຼືປະຊາຊົນລາວໃນທຸກຊົນເຜົ່າກໍ່ມີລັກສະນະຄ້າຍຄືກັນໃນເວລາເຮັດວຽກ ແຕ່ຫາກຈະເຈາະເລິກລົງໄປໃນຣາຍຣະອຽດ ຈະພົບຄົນລາວມີຂໍ້ໄດ້ປຽບເສັຽປຽບແຕກຕ່າງຈາກຄົນຕ່າງຊາດ

ການຈະເຮັດວຽກໄດໆໃຫ້ປະສົບຄວາມສຳເຣັດ ຈະຕ້ອງມີຄວາມມັກເປັນຫລັກ ແຕ່ກ່ອນທີ່ເຮົາຈະຮູ້ຄວາມມັກຂອງເຮົານັ້ນ ເຮົາຕ້ອງຮອງເຮັດວຽກຫລາຍໆ ແນວກ່ອນ ຖ້າເປັນໄປໄດ້ໃນຄັ້ງແລກຂອງການເຣີ້ມເຮັດວຽກແຕ່ຣະຄົນບໍ່ຄວນຈະເລືອກວຽກຖ້າມີວຽກອັນໄດກໍ່ເຮັດ ເພາະເຮົາບໍ່ໄດ້ທົດລອງເຮັດແລ້ວຈຶ່ງຈະຮູ້ວ່າເຮົາມັກວຽກແບບໄດ ການເລືອກຢາກເຮັດວຽກນີ້ ແລະບໍ່ຢາກເຮັດວຽກນັ້ນ ທຳໃຫ້ເຮົາປິດກັ້ນໂອກາດຂອງເຮົາເອງ

ຂ້າພະເຈົ້າເຄີຍໄປບັລຍາຍໃນການສັມມະນາໃນເຂດຕ່າງ ໆ ເມື່ອຫລາຍປີກ່ອນມາ ແລະໄດ້ມີຜູ້ຟັງຖາມກ່ຽວກັບການເລືອກວຽກທີ່ເຮັດ ຂ້າພະເຈົ້າໄດ້ຕອບໄປວ່າການເຮັດວຽກຈະດີໄດ້ ເຮົາຕ້ອງມີຄວາມຮັກໃນວຽກທີ່ເຮົາເຮັດນັ້ນ ແລະໄດ້ກ່າວວ່າ ຄວາມສຸຂ ຄື ການທີ່ມີຄົນຈ້າງໃຫ້ເຮັດໃນສິ່ງທີ່ເຮົາຮັກທີ່ຈະເຮັດ ທ່ານວ່າຢ່າງໄດ ມີຫລາຍຄົນເຮັດວຽກທີ່ຕົນເອງມັກແລະມັກທີ່ຈະເຮັດ ແມ່ນຈະບໍ່ມີໃຜຈ້າງໃຫ້ເຮັດ ເຮົາຈຶ່ງເປັນຄົນອາສາສມັກເຮັດວຽກຕ່າງ ໆ ໃຫ້ໄດ້ຫລາຍ

ແຕ່ເຮົາຈະຊາບໄດ້ຢ່າງໄດວ່າເຮົາມັກວຽກອັນໄດ ບໍ່ມັກວຽກອັນໄດ (ຄຳຕອບ)ກໍ່ຄື-ຖ້າບໍ່ລອງເຮົາຈະຮູ້ອີ່ຫຍັງ ຖ້າບໍ່ລອງຈະບໍ່ຮູ້ທ່ານເອີຍ ວ່າເຮົາມັກຫຼືບໍ່ມັກອັນໄດຄົນທີ່ມັກທົດລອງ ບໍ່ກົວຂອງແປກໃໝ່ໃຜໃຫ້ເຮັດວຽກອັນໄດກໍ່ເຮັດເຣື້ອຍໄປ ຈະມີໂອກາດໄດ້ເຮັດວຽກຫລາຍປະເພດແລະໄດ້ຮຽນຮູ້ ຄວາມມັກແລະຄວາມຖນັດຂອງຕົນເອງ ແລະເຮົາຄວນຈະເຮັດວຽກທຸກຢ່າງເຕັມທີ ກັບທຸກ ໆວຽກທີ່ມີຜູ້ມອບໝາຍໃຫ້ເຮົາເຮັດ ຫຼື ແມ່ນກະທັ້ງທີ່ເຮົາອາສາເຮັດເອງ

ການຄົ້ນຫາສິ່ງທີ່ເຮົາເຮັດໄດ້ດີ ຫຼື ເຮັດໄດ້ບໍ່ດີ ອາດຈະເຣີ້ມມາຈາກການເຮັດຣາຍການ ສິ່ງທີ່ເຮົາເຮັດໄດ້ດີກັບຄວາມມັກແລະອຸປນິສັຍໃຈຄໍ ທີ່ມີມາຕັ້ງແຕ່ນ້ອຍໆ ອາທິເຊັ່ນ ບາງຄົນມັກເວົ້າ ບາງຄົນມັກຂຽນບາງຄົນມັກດົນຕຣີ ແລະກິລາ ບໍ່ໄຊ້ວ່າມັກເວົ້າແລ້ວຕ້ອງໄປເປັນສະມາຊິກສະພາຜູ້ແທນຣາສດອນ ແຕ່ຖ້າມັກເວົ້າກໍ່ສາມາດຈະເຮັດອາຊີບການຕຣາດ ຫຼືວຽກໂຄສະນາໄດໆເມື່ອເຮັດຣາຍການເສັດແລ້ວ ເຮົາຈະເຫັນເອງວ່າ ເຮົາສົມກັບວຽກອັນໄດແທ້ ໆ

ນຶກໄລ່ລົງໄປເຣື້ອຍໆແລະຂຽນຈົ່ນຄົບເບີດ ແລ້ວຈຶ່ງນຳມາຈັດເປັນໝວດເປັນໝູ່ມາພິຈາຣະນາວ່າ ສວ່ນໄດເປັນລັກສະນະ ຊຶ່ງຫັດໄດ້ ຝຶກໄດ້ ສວ່ນໄດເປັນພອນສວັນ ຊຶ່ງກໍ່ສ້າງໄດ້ເຊັ່ນດຽວກັນ ແຕ່ຢ່າກໜ່ອຍຣວມເຖິງຕ້ອງເບິ່ງຂໍ້ຈຳກັດດວ້ຍ ອາທິເຊັ່ນ ຕົວເລັກນອ້ຍໄປເລັ້ນບາສະເດບອນກໍ່ເສັຽປຽບ ເປັນຕົ້ນ ບາງຢ່າງກໍ່ເປັນເຣື້ອງທີ່ເຮົາບໍ່ເຄີຍຊິນແລະຝືນໃຈຍາກ ອາທິເຊັ່ນ ຄົນທີ່ບໍ່ມັກຢູ່ກາງແຈ້ງເຫີງ ໆ ກໍ່ບໍ່ຄວນຈະເລືອກວຽກທີ່ຕອ້ງເຮັດກາງແຈ້ງເປັນຕົ້ນ

ລັກສະນະທີ່ຄວນຈະມີ ຫຼື ຖ້າບໍ່ມີຄວນຈະຝຶກໃຫ້ມີ ຄື ການເວົ້າໃນທີ່ສາທາຣະນະ ຂ້າພະເຈົ້າພົບວ່າຜູ້ບໍຣິຫານຫລາຍທ່ານໃນອະດີດ ກໍ່ເປັນຄົນຂີ້ອາຍມາກ່ອນ ແຕ່ເມື່ອມີໜ້າທີ່ການງານບັງຄັບເຮົາກໍ່ຕ້ອງເຮັດ ເຮັດໄປເຣື້ອຍໆ ກໍ່ຈະເກັ່ງດອກ-

ການຮຽນຮູ້ເປັນສິ່ງທີ່ສຳຄັນ ເຮົາສາມາດຮຽນຮູ້ໄດ້ຈາກທຸກຄົນ ຈາກຫົວໜ້າ ຈາກເພື່ອນຮ່ວມງານແລະຈາກລູກນ້ອງ ເຮົາຈະກວດຖນົນໃຫ້ເກັ່ງ ຕ້ອງໄປຖາມເຈົ້າໜ້າທີ່ເຂດກົມແພງເມືອງ ຖ້າຢາກຈະຮູ້ເສັ້ນທາງຢ່າງຖນັດແລະໂປ່ງສັຍ ຕ້ອງໄປຖາມຄົນຂັບຣົດແທກຊີ ຫຼືຄົນຂັບຣົດສາມລໍ້ເປັນຕົ້ນ ທີ່ສຳຄັນຕ້ອງບໍ່ອາຍທີ່ຈະຖາມຄົນທີ່ຮູ້ມາແລ້ວ ການຖາມຄຳຖາມນັ້ນທຳໃຫ້ເຮົາໄດ້ຂໍ້ມູນ ເພື່ອປະກອບການຕັດສິນໃຈສ່ວນນັກບໍຣິຫານນັ້ນເຂົາບໍ່ໄດ້ເກັ່ງຫຼືເຂົ້າໃຈທຸກເຣື້ອງ ແຕ່ເຂົາມີລັກສະນະໃນການຖາມແລະປະມວນຂໍ້ມູນມາເພື່ອໄຊ້ໃນການແກ້ໄຂບັນຫາ ຫຼືການຕັດສິນໃຈ ແລະການຕັດສິນໃຈຈະອອກມາດີຫຼືບໍ່ນັ້ນ ຂຶ້ນຢູ່ກັບຂໍ້ມູນທີ່ໄດ້ຮັບ

ຂໍ້ສຳຄັນໃນການປູທາງໄປສູ່ຄວາມສຳເຣັດນັ້ນ ຄື ການມຸ້ງເນັ້ນຄຸນນະພາບ ຕ້ອງຕັ້ງໃຈເຮັດງານຢ່າງດີທີ່ສຸດ ເຮົາຕ້ອງພັທນາຝຶກຝົນຕົນເອງໃຫ້ສຳນານໃນການທີ່ເຮັດນັ້ນ ເຮົາຕ້ອງເພີ້ມມູນຄວາມຮູ້ຢູ່ຕຣອດເວລາ ການອ່ານໜັງສືຊ່ວຍໃນການຮຽນຮູ້ແລະຊ່ວຍຝຶກຝົນ ຈິນຕນາການໄດ້ຫລາຍ ບໍ່ມີໃຜຮູ້ໄປທຸກເຣື້ອງດອກ ຖ້າເຮົາຢາກຮູ້ອັນໄດແລະບໍ່ຊາບອັນໄດຈະໄປຖາມໃຜ ໃນສມັຍກ່ອນຕ້ອງເຂົ້າໄປຄົ້ນຫາໃນຫ້ອງສມຸດ ແຕ່ວ່າໃນສມັຍນີ້ຕ້ອງເຂົ້າໄປຄົ້ນຫາໃນເວັບຊ່າຍເລີທ່ານເອີຍ ເພາະເຣື້ອງຣາວຕ່າງໆນັ້ນມີຫລວງຫລາຍ ຂໍໃຫ້ທ່ານເລືອກອ່ານຈາກແຫລ່ງທີ່ທ່ານເຊື່ອຖືໄດ້ ແລະເລືອກຄົ້ນກອງຂໍ້ມູນທີ່ເປັນປະໂຍດໄປມື້ວັນໆ ນຶ່ງທ່ານກໍ່ຮຽນຮູ້ໄປຫລາຍແລະກໍ່ບໍ່ຢຸດທີ່ຈະຮຽນຮູ້ຕຣອດຊີວິດ ໂດຍສະເພາະທີ່ກ່ຽວກັບເທກໂນໂລຢີແລະການສື່ສານ ຊຶ່ງຄົນລາວສ່ວນໃຫຍ່ບໍ່ຄ່ອຍຖນັດ

ຂໍ້ສຳຄັນ ຄື ຕ້ອງບໍ່ກຽດງານຖ້າຢາກເຕີບໂຕກ້າວໜ້າ ເຮົາຕ້ອງເຮັດງານທຸກຢ່າງທີ່ໄດ້ຮັບມອບໝາຍເວັ້ນແຕ່ມີຂໍ້ຈຳກັດແທ້ໆ ມີຄົນຖາມແລະເວົ້າວ່າເຮົາເຂົ້າສັງຄົມບໍ່ເປັນ ເຮົາຊິເປັນຜູ້ບໍຣິຫານໄດ້ບໍ ຄຳຕອບ ກໍ່ຄື ວ່າໄດ້ສະເພາະເມື່ອທ່ານເປັນຮຸ້ນສ່ວນຫຼືເຈົ້າຂອງກິດຈະການເທົ່ານັ້ນ ຖ້າເປັນມືອາຊີບ(ແປວ່າເປັນລູກຈ້າງ) ໃຜເຂົ້າສັງຄົມບໍ່ເປັນກໍ່ອາດຈະໂຕ້ໄດ້ບໍ່ເຕັມທີຕາມຄວາມສາມາດ ດັ່ງນັ້ນ ຈະມັກຫຼືບໍ່ມັກ ຕ້ອງໄປຮ່ວມງານບາງເປັນຄັ້ງຄາວ

ຄຸນສົມບັດທີ່ສຳຄັນຫລາຍ ກໍ່ຄື ການຄິດໃນແງ່ບວກ ຂ້າພະເຈົ້າມີເພື່ອນທີ່ເຮັດງານໃນສູນກາງພັກແລະເປັນນັກການປະຕິວັດໃນອະດີດທີ່ບໍ່ປົກກະຕິ ເຂົາບອກວ່າເຮົາບໍ່ເວົ້າວ່າ ດີ ຫຼືບໍ່ດີ ເຮົາຈະເວົ້າວ່າດີ ດີຫລາຍແລະດີທີ່ສຸດ ເຊັ່ນ ນັກການເມືອງທີ່ເຮັດໄດ້ຊວຍທີ່ສຸດໃນບັນດານັກການເມືອງທັງ-3-ກຸ່ມກໍ່ບອກວ່າເຮັດໄດ້ດີ ຄົນທີ່ເຮັດໄດ້ດີຕໍ່ມາກໍ່ບອກວ່າເຮັດໄດ້ດີຫລາຍ ແລະຄົນທີ່ເຮັດໄດ້ດີກົ່ວອີກ-2-ກຸ່ມກໍ່ບອກວ່າດີທີ່ສຸດເທົ່ານີ້ ກຸ່ມການເມືອງກໍ່ຈະມີກຳລັງໃຈ ສ່ວນໃຫຍ່ເວລາແກ້ບັນຫາເຮົາຕ້ອງພະຍາຍາມຫາແນວຄິດໃນແງ່ບວກ ເຊັ່ນ ຫຸ້ນຕົກບໍ່ໄດ້ຂາຍເລີຍກໍ່ຄິດວ່າຍັງດີທີ່ບໍ່ໄດ້ລົງທຶນໃນຫຸ້ນທັງເບີດ ຍັງມີເງິນສ່ວນອື່ນຢູ່

ໃນການລົງທຶນໃນຕຣາສານນີ້ ແລະພັນທະບັດເປັນຕົ້ນ

ນອກຈາກນີ້ໃນການເຮັດວຽກໃຫ້ປະສົບຄວາມສຳເຣັດ ຕ້ອງມີຈັດລຳດັບຄວາມສັມພັນ ແລະບາງຄັ້ງກໍ່ຕ້ອງເລືອກງານກ່ອນເຣື້ອງສ່ວນຕົວ ຫາກເລືອກທີ່ຈະເຮັດງານກໍ່ຕ້ອງບໍ່ກຽດ ວ່າວັນຢຸດເຮັດງານບໍ່ໄດ້ໄປຕ່າງແຂວງບໍ່ໄດ້ ຊຶ່ງຂໍ້ນີ້ລະຄົນລາວສ່ວນໃຫ່ຽຈະເສັ່ງປຽບ ເພາະສະນັ້ນຫາກສອບສຳພາດແລ້ວກັມມະການຖາມວ່າໄປໄດ້ບໍ່ ຖ້າຢາກໄດ້ງານແລະຢາກກ້າວໜ້າຕ້ອງໄປໄດ້ ແຕ່ຕ້ອງພະຍາຍາມມີຄວາມສຳຄັນໃນຊີວິດ ແລະໃຫ້ເວລາກັບຄອບຄົວແນ່

ໃນເວລາເຮັດງານຕ້ອງມີຄວາມຈິງໃຈ ຕົງໄປຕົງມາ ແລະມີຄວາມປາຖນາດີຕໍ່ຜູ້ອື່ນ ບໍ່ວ່າຈະເປັນຫົວໜ້າງານຫຼືເພື່ອນຮ່ວມງານ ຫຼືລູກນ້ອງ ແຕ່ຄວາມຈິງໃຈການສະແດງຄວາມເຫັນຢ່າງຕົງໄປຕົງມາ ແລະຄວາມປາຖນາດີນີ້ ຈະທຳໃຫ້ທຸກຢ່າງງ່າຍຂຶ້ນ ການແກ້ໄຂບັນຫາການວາງກຳຣະຍຸດເປັນໄປຢ່າງຣາບຣື້ນສັມພັດຜົນຫລາຍຂຶ້ນແລະໄຊ້ເວລານ້ອຍລົງ ນອກຈາກນີ້ ການທີ່ເຮົາໄດ້ເປັນຜູ້ບໍຣິຫານ ກໍ່ເພາະມີຜູ້ເປີດໂອກາດໃຫ້ ດັ່ງນັ້ນ ເຮົາກໍ່ຄວນຕ້ອງເປີດໂອກາດໃຫ້ຜູ້ອື່ນດ້ວຍ ແລະເປີດໂອກາດໃຫ້ເຂົາສະແດງຝີມືເພື່ອໃຫ້ເຂົາເຕີບໂຕ ການເປັນຫົວໜ້າແລ້ວເຫັນຜູ້ທີ່ເຄີຍຮ່ວມງານກັນ ເຕີບໂຕກ້າວໜ້າເປັນຄວາມພາກພູມີໃຈຢ່າງເຫລືອລົ້ນ

ມີຂໍ້ສຳຄັນຢ່າງນຶ່ງທີ່ຄົນລາວຕ້ອງຣະວັງ ຄື ການໄຊ້ອາຣົມຕ້ອງບໍ່ອ່ອນເກີນໄປບໍ່ແຂງເກີນໄປ ອັນນີ້ເປັນຈຸດອ່ອນທີ່ສຳຄັນ ຫາກຜູ້ບໍຣິຫານຄົນລາວທ່ານໄດເຮັດໄດ້ດີ ກໍ່ມັກຈະປະສົບຄວາມສຳເຣັດແລະເຕີບໂຕກ້າວໜ້າໄດ້ດີ ແຕ່ຈະເລັ່ນບົດໃຈດີຢ່າງດຽວກໍ່ບໍ່ໄດ້ ພໍເຖິງບົດຮ້າຍກໍ່ຕ້ອງກະໂດດເຂົ້າໃສ່ເໝືອນກັນ ເພາະສະນັ້ນຈຶ່ງໄດ້ເວົ້າວ່າເປັນນັກບໍຣິຫານໄດ້ ບໍ່ສະນັ້ນ ຄົນເຂົາຈະຄິດວ່າເຮົາບໍ່ເອົາຄວາມຈິງມີແຕ່ຄວາມອອ່ນແອໂຍກໄປໂຍກມາຖ້າແຕ່ຄົນອື່ນມາຊວ່ຍ ເພາະຕົນເອງເພິ່ງຕົນເອງບໍ່ໄດ້

ຂໍໃຫ້ຄົນລາວເຮົາທຸກໆທ່ານ ທີ່ປະສົງຈະ ຈະເຣີນກ້າວໜ້າໃນການເຮັດງານ ແລ້ວໃຫ້ຕັ້ງໃຈເຮັດງານແລະໃຫ້ໄດ້ປະສົບຄວາມສຳເຣັດໂດຍຖົ່ວໜ້າກັນ ແລະຜູ້ອ່ານທີ່ເປັນຄົນລາວ ຈະນຳໄປປະຍຸກໄຊ້ຫຼືນຳໄປເປັນເຄື່ອງມືໃນການເຂົ້າໃຈຜູ້ຮ່ວມງານ ແຕ່ຄົນລາວກໍ່ບໍ່ຄວນວ່າກັນ ອາຊີບນີ້ເປັນອາຊີບມີອາຍຸມານານນັບໝື່ນໆປີແລ້ວເປັນອາຊີບທີ່ບໍ່ມີໃຜກ້າຍອມຮັບແລະໃນຂນະດຽວກັນກໍ່ບໍ່ມີໃຜກ້າປະຕິເສດວ່າບໍ່ມີຈິງ ເປັນອາຊີບທີ່ມີມາກ່ອນທີ່ຈະມີສາຂາວິຊາຊີບອື່ນໆເກີດຂຶ້ນມາບົນໂລກນີ້ ອາຊີບນີ້ບໍ່ມີວັນເບີດກະສຽນສາມາດເຮັດໄດ້ຕາມເທົ່າທີ່ຍັງມີແຮງກາຍແຮງໃຈທີ່ພ້ອມມາຕັ້ງແຕ່ນ້ອຍຈົ່ນແກ່ວ່າຈັ່ງຊັ້ນເຖີ ພວກເຮົາຕ້ອງເພີ້ມຄວາມຍຸຕິທັມໃຫ້ກັບສັງຄົມຢ່າງທົ່ວເຖິງແລະວອ່ງໃວ ນະໂຍບາຍເພີ້ມໂອການສ້າງອາຊີບໃຫ້ຄົນມີງານທຳແລະໃຫ້ການສຶກສາຢ່າງຈິງຈັງກຳຈັດການຄໍຮັບຊັ້ນບໍ່ໃຫ້ໂກງກິນຢ່າງສະດວກແລະປ້ອງກັນການແພ້ກະຈາຍວັທນະທັມດ້ານບ້າອຳນາດບ້າວັດຖຸແລະໃຫ້ລົດຣາຍການທີວີໃນການບັນເທີງຢ່າງບໍ່ມີຜົນແຕ່ຕ້ອງຄວນມາໄຊ້ໃນເວບຊ່າຍເພື່ອຈະໄດ້ມີຄວາມຮູ້ ຫາກພວກເຮົານຳເຣື້ອງເຫລົ່ານີ້ໄປປະຕິບັດບໍ່ວ່າປະເທດໄດສັງຄົມໄດລ້ວນແລ້ວແຕ່ຈະຢູ່ເຢັນເປັນສຸຂຄົນດີເພີ້ມຂຶ້ນ ຄົນຊົ່ວລົດລົງຄວາມດີງາມກໍ່ຈະກັບມາສູ່ຈິດໃຈຄົນທົ່ວໆໄປ (ຈາກສູນກາງ ສັນພູໝອກທີ່ນະຄອນວຽງຈັນ) ໃນນາມພັກປະຊາຊົນລາວອິສຣະ